**ຄຳເຫັນສະຫຼຸບຈາກກອງປະຊຸມລັດຖະບານ ປະຈຳເດືອນ ມີນາ 2020**
**ກ່ຽວກັບ ມາດຕະການສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂການລະບາດຂອງພະຍາດ**
**COVID-19**

**(ກອງປະຊຸມລັດຖະບານ ສະໄໝສາມັນ, ວັນທີ 18 ມີນາ 2020)**

## I. <u>ສະພາບຄວາມເປັນຈິງ ຂອງການລະບາດ</u>:

### 1. ສະພາບທົ່ວໂລກ:

- ການລະບາດ ຂອງພະຍາດ (COVID-19) ເລີ່ມຕົ້ນຢູ່ ສປ ຈີນ ເມືອງ ອູຮັ່ນ ແຂວງຫູເປີຍ ແຕ່ທ້າຍປີ 2019, ມາຮອດໄລຍະນີ້ ສປ ຈີນ ສາມາດຈຳກັດການລະບາດໄດ້ແລ້ວ ແລະ ຍັງໄດ້ໄປຊ່ວຍປະເທດອື່ນທີ່ກຳລັງມີການລະບາດ ຊຶ່ງປະຈຸບັນ, ສະພາບການລະບາດຂອງພະຍາດ COVID-19 ໄດ້ຂະຫຍາຍເປັນວົງກວ້າງ ໃນຫຼາຍປະເທດຢູ່ພາກພື້ນ ແລະ ໃນທົ່ວໂລກ ຮ້າຍແຮງກວ່າໝູ່ແມ່ນຢູ່ປະເທດຢູໂຣບ (ອີຕາລີ, ສະເປນ, ຝຣັ່ງ) ແລະ ປະເທດອີລານ, ຕາມຂໍ້ມູນສະຖິຕິ ມາຮອດ ເວລາ 06:00 ໂມງ (ເຊົ້າ) ວັນທີ 18 ມີນາ ມີຫຼາຍກວ່າ 165 ປະເທດທີ່ມີການລະບາດ, ມີກໍລະນີຢັ້ງຢືນຜູ້ຕິດເຊື້ອແລ້ວ 199,092 ກໍລະນີ, ເສຍຊີວິດ 7,966 ກໍລະນີ, ປິ່ວດີແລ້ວ 81.109 ຄົນ.
- ໃນວັນທີ 12 ມີນາ 2020 ນີ້ ອົງການອະນາໄມໂລກ ໄດ້ປະກາດ ເຫດການສຸກເສີນທາງດ້ານສາທາລະນະສຸກ ເປັນການລະບາດໃຫຍ່ (pandemic) ແລະ ໄດ້ຮຽກຮ້ອງໃຫ້ບັນດາປະເທດໃນທົ່ວໂລກຍົກລະດັບມາດຕະການເຝົ້າລະວັງ, ສະກັດກັ້ນ ແລະ ຄວບຄຸມການລະບາດ ແລະ ໂຕ້ຕອບ.

### 2. ສະພາບຢູ່ ສປປ ລາວ:

ເຖິງວ່າໃນປະຈຸບັນຢູ່ ສປປລາວ ຍັງບໍ່ທັນກວດພົບຜູ້ຕິດເຊື້ອພະຍາດ COVID-19, ແຕ່ປະເທດເຮົາກໍ່ຍັງມີຄວາມສ່ຽງສູງຍ້ອນວ່າ ປະເທດເຮົາມີຊາຍແດນ ຕິດຈອດ ແລະ ມີການເດີນທາງເຂົ້າມາຂອງຄົນຈາກປະເທດທີ່ມີຜູ້ຕິດເຊື້ອພະຍາດດັ່ງກ່າວ. ດັ່ງນັ້ນ ເຖິງບໍ່ທັນກວດພົບຜູ້ຕິເຊື້ອເທື່ອ, ລັດຖະບານກໍໄດ້ສຸມໃສ່ບັນດາມາດຕະການສະກັດກັ້ນ ແລະ ປ້ອງກັນການແຜ່ລະບາດ ພ້ອມທັງມີການກະກຽມຄວາມພ້ອມຫຼາຍດ້ານ ເພື່ອຮັບມືກັບສະພາບການ ກໍລະນີ ທີ່ກວດພົບຜູ້ຕິດເຊື້ອໃນຕໍ່ໜ້າ.

## II. <u>ມາດຕະການຕ່າງໆ ທີ່ປະຕິບັດຜ່ານມາ.</u>

ເລີ່ມແຕ່ເດືອນ ມັງກອນ ປີ 2020 ເປັນຕົ້ນມາ, ລັດຖະບານໄດ້ປະຕິບັດບາງມາດຕະການເພື່ອສະກັດກັ້ນ ແລະ ປ້ອງກັນ ແຕ່ຫົວທີເປັນຕົ້ນ ແມ່ນ:

1. ໄດ້ແຕ່ງຕັ້ງຄະນະສະເພາະກິດເພື່ອຊີ້ນຳການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດດັ່ງກ່າວ, ໂດຍມີທ່ານຮອງນາຍົກລັດຖະມົນຕີ ສົມດີ ດວງດີ, ເປັນຫົວໜ້າຄະນະສະເພາະ

ກິດ ດັ່ງກ່າວນັ້ນ ແລະ ປະກອບຄະນະຈາກພາກສ່ວນກ່ຽວຂ້ອງ, ຄະນະສະເພາະກິດ ດັ່ງກ່າວ ໄດ້ປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງຫຼາຍຢ່າງ, ໃນນັ້ນ ລວມເຖິງ:

- ໂຄສະນາເຜີຍແຜ່ໃຫ້ສັງຄົມ ກໍ່ຄືປະຊາຊົນເຂົ້າໃຈກ່ຽວກັບໄພອັນຕະລາຍ ແລະ ວິທີປ້ອງກັນເພື່ອຫຼຸດຜ່ອນຄວາມສ່ຽງ ໃນການຕິດເຊື້ອພະຍາດດັ່ງກ່າວ;

- ເຂັ້ມງວດກັ່ນກອງຜູ້ເດີນທາງເຂົ້າມາໃນ ສປປ ລາວ ໂດຍການກວດອຸນນະພູມ ແລະ ຄັດແຍກຜູ້ສົງໃສຕິດເຊື້ອ ເພື່ອຫຼີກລ້ຽງຄວາມສ່ຽງຈາກການແຜ່ລະບາດຂອງພະຍາດ;

- ກວດສຸຂະພາບຂອງຜູ້ທີ່ຕົກຢູ່ໃນກໍລະນີສົງໃສ ເພື່ອຢັ້ງຢືນການບົ່ງມະຕິພະຍາດ;

- ກຽມຄວາມພ້ອມຂອງໂຮງໝໍ ເພື່ອຮອງຮັບການແຍກປ່ຽວຜູ້ສົງໃສຕິດເຊື້ອ ແລະ ຄຸ້ມຄອງກໍລະນີຖ້າມີຜູ້ຕິດເຊື້ອ;

- ຝຶກອົບຮົມຍົກລະດັບຄວາມຮູ້ໃຫ້ແພດໝໍ ແລະ ພະນັກງານ ແລະ ຝຶກເຫດການຈໍາລອງຕອບໂຕ້ສະຖານະການຕ່າງໆ ແລະ ອື່ນໆ.

2. ລັດໄດ້ຈັດສັນງົບປະມານ ເພື່ອຈັດຊື້ຜ້າປິດປາກ-ປິດດັງ, ນ້ຳຢາລ້າງມື ແລະ ອຸປະກອນການແພດທີ່ຈໍາເປັນຈໍານວນໜຶ່ງ ເພື່ອຮັບໃຊ້ໃຫ້ແກ່ການປ້ອງກັນ ແລະ ຄວບຄຸມພະຍາດດັ່ງກ່າວ.

3. ໄດ້ອອກມາດຕະການຄຸ້ມຄອງລາຄາຜ້າປິດປາກ-ປິດດັງ, ນ້ຳຢາລ້າງມື ແລະ ອຸປະກອນການແພດ ໂດຍໄດ້ກໍານົດໃຫ້ເປັນສິນຄ້າຄວບຄຸມ.

4. ໄດ້ມອບໃຫ້ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຈັດສໍາມະນາປຶກສາຫາລື ກັບຂະແໜງການທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ກ່ຽວກັບຜົນກະທົບຂອງ COVID-19 ແລະ ສະເໜີມາດຕະການທາງດ້ານເສດຖະກິດ ເພື່ອຮັບມືກັບຜົນກະທົບດັ່ງກ່າວ.

## III. <u>ມາດຕະການທີ່ຈະຈັດຕັ້ງປະຕິບັດໃນຕໍ່ໜ້າ</u>:

ອີງໃສ່ສະພາບຄວາມເປັນຈິງ ແລະ ຄວາມສ່ຽງຕໍ່ການແຜ່ລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ ແລະ ເພື່ອສະກັດກັ້ນ ແລະ ປົກປ້ອງ ກຽມຮັບມືກັບການແຜ່ລະບາດ, ລັດຖະບານ ຈະສືບຕໍ່ປະຕິບັດ ມາດຕະການຜ່ານມາ ທີ່ໄດ້ວາງອອກແລ້ວ ແລະ ມາດຕະການເພີ່ມເຕີມ ຕາມການຕົກລົງດັ່ງນີ້:

### 1. ມາດຕະການສະກັດກັ້ນ:

1) ປິດດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃນຂອບເຂດທົ່ວປະເທດ. ສ່ວນດ່ານສາກົນ ໃຫ້ເບິ່ງຄວາມຮັບປະກັນຮອບດ້ານ ໃນນັ້ນລວມເຖິງຄວາມພ້ອມທາງດ້ານອຸປະກອນ ແລະ ພະນັກງານ ໃນການກວດກາ, ກັ່ນກອງຫາຜູ້ຕິດເຊື້ອພະຍາດ ຢ່າງໄດ້ມາດຕະຖານ ຈຶ່ງອະນຸຍາດໃຫ້ເປີດ ໃຫ້ເຂົ້າ-ອອກ ປົກກະຕິ ໄດ້;

2) ໂຈະການອອກ VISA ກັບດ່ານທຸກປະເພດ, ລວມທັງ E-Visa ແລະ ການອອກວີຊາທ່ອງທ່ຽວ ສຳລັບທຸກປະເທດ ໃນໄລຍະເວລາ 30 ວັນ. ສຳລັບຜູ້ທີ່ໄດ້ ວີຊາເຂົ້າລາວແລ້ວ ກໍຕ້ອງມີການຢັ້ງຢືນການກວດສຸຂະພາບ ແລະ ກວດປະຫວັດການເຄື່ອນໄຫວໃນໄລຍະ 14 ວັນຜ່ານມາ ... ສຳລັບປະເທດ ທີ່ໄດ້ຮັບການຍົກເວັ້ນວີຊາ ແມ່ນເຫັນດີໃຫ້ຍົກເລີກການຍົກເວັ້ນວີຊາດັ່ງກ່າວຊົ່ວຄາວ ຈົນກວ່າຈະມີການພິຈາລະນາໃໝ່ຂອງລັດຖະບານ.

3) ຫຼີກລ້ຽງການເດີນທາງໄປຕ່າງປະເທດ ໃນໄລຍະນີ້ ຂອງ ພົນລະເມືອງລາວ, ໂດຍສະເພາະ ການເດີນທາງ ດ້ວຍຍົນ ແລະ ພະຫະນະ ທີ່ມີຄົນຫຼາຍ.

4) ຜູ້ທີ່ເດີນທາງກັບຈາກປະເທດທີ່ມີການແຜ່ລະບາດຂອງພະຍາດ ໃຫ້ປະຕິບັດການແຍກປ່ຽວດ້ວຍຕົນເອງຢ່າງໜ້ອຍ 14 ວັນ ເພື່ອຕິດຕາມສຸຂະພາບຂອງຕົນ ດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ. ກໍລະນີມີອາການໄຂ້ກໍຕ້ອງຕິດຕໍ່ຫາໝໍ ແລະ ເຈົ້າໜ້າທີ່ກ່ຽວຂ້ອງໂດຍດ່ວນ (ລາຍລະອຽດ ໄດ້ກຳນົດໄວ້ໃນໜັງສືແຈ້ງການ ຂອງຄະນະສະເພາະກິດ ສະບັບເລກທີ 12/ສພກ, ລົງວັນທີ 16 ມີນາ 2020).

5) ຫຼີກລ້ຽງການໂຮມຊຸມນຸມໃຫ່ຍ ທີ່ມີມວນຊົນເຂົ້າຮ່ວມຈຳນວນຫຼາຍ ເປັນຕົ້ນ: ງານບຸນປະເພນີຕ່າງໆ, ງານວາງສະແດງສິນຄ້າ, ງານແຂ່ງຂັນກິລາ, ງານດອງ, ບັນດາກິດຈະກຳຕ່າງໆໃນການສະເຫຼີມສະຫຼອງບຸນປີໃໝ່ລາວ ແລະ ອື່ນໆ

6) ປິດກິດຈະການຮ້ານບັນເທີງ, ຮ້ານຄະຣາໂອເກະ ແລະ ຮ້ານນວດ, ສ່ວນກິດຈະການອື່ນໆ ແມ່ນສາມາດດຳເນີນໄດ້ປົກກະຕິ ແຕ່ໃຫ້ບັນດາເຈົ້າຂອງກິດຈະການມີມາດຕະການປ້ອງກັນຂັ້ນພື້ນຖານ ເປັນຕົ້ນ ແມ່ນການກວດອຸ່ນນະພູມ ແລະ ສະໜອງນ້ຳຢາລ້າງມື ໃຫ້ລູກຄ້າເພື່ອປ້ອງກັນຕົນເອງ ແລະ ຜູ້ອື່ນ.

7) ປິດໂຮງຮຽນ ແຕ່ໂຮງລ້ຽງເດັກ, ອະນຸບານ, ປະຖົມສຶກສາ, ມັດທະຍົມ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນທົ່ວປະເທດ ຊົ່ວຄາວ ຈົນກວ່າມີການປ່ຽນແປງ, ພ້ອມກັນນັ້ນ ກໍໃຫ້ສົມທົບກັບບັນດາໂຮງຮຽນ ເພື່ອຮີບຮ້ອນຄົ້ນຄວ້າປຶກສາຫາລື ເພື່ອກຳນົດນະໂຍບາຍ ຫລື ຄຳແນະນຳໃນການສົ່ງເສີມວິທີການຮຽນ-ການສອນ ໂດຍຜ່ານລະບົບອອນລາຍ, ໂທລະພາບ, ວິທະຍຸ, ໜັງສືພິມ ແລະ ວິທີການອື່ນໆ ໃຫ້ນັກຮຽນ-ນັກສຶກສາ.

8) ກຳນົດສະຖານທີ່ໃນການກັກບໍລິເວນ 14 ວັນ ສຳລັບຜູ້ທີ່ເດີນທາງມາຈາກປະເທດທີ່ມີຄວາມສ່ຽງໃນນັ້ນ ລວມເຖິງແຮງງານລາວ ແລະ ນັກສຶກສາລາວ ທີ່ຈະເດີນທາງກັບລາວ ໃນໂອກາດບຸນປີໃໝ່ລາວໃນປີນີ້ (ກ່ຽວກັບແຮງງານລາວ ຈະມີການແນະນຳລະອຽດຕາງຫາກ).

9) ແນະນຳໃຫ້ຄົນລາວ ທີ່ອາໄສຢູ່ຕ່າງປະເທດ ເລື່ອນການເດີນທາງກັບປະເທດ ຈົນກວ່າສະຖານະການ ການລະບາດທົ່ວໂລກຈະດີຂຶ້ນ.

**2. ມາດຕະການປ້ອງກັນ:**

1) ປັບປຸງສູນຂໍ້ມູນຂ່າວສານ ທີ່ຂຶ້ນກັບຄະນະສະເພາະກິດ ເພື່ອຊີ້ນໍາການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດດັ່ງກ່າວ ເພື່ອແລກປ່ຽນ, ກວດກາຄວາມຖືກຕ້ອງ ແລະ ສະໜອງຂໍ້ມູນທີ່ຊັດເຈນ ແລະ ວ່ອງໄວ ກ່ຽວກັບສະພາບການລະບາດ ຂອງ COVID-19 ຢູ່ພາຍໃນ, ພາກພື້ນ ແລະ ໃນໂລກ;

2) ໂຄສະນາເຜີຍແຜ່ຂໍ້ມູນ ເພື່ອໃຫ້ສັງຄົມ ກໍ່ຄືປະຊາຊົນຮູ້ຈັກ ແລະ ເຂົ້າໃຈ ເປັນເອກະພາບ ກ່ຽວກັບໄພອັນຕະລາຍ ແລະ ຄວາມສ່ຽງໃນການຕິດເຊື້ອພະຍາດ ພ້ອມທັງເຜີຍແຜ່ຄໍາແນະນໍາກ່ຽວກັບວິທີປ້ອງກັນ, ສະກັດກັ້ນ ແລະ ການເຂົ້າເຖິງ ການບໍລິການທາງດ້ານສາທາລະ ນະສຸກ;

3) ປຸກລະດົມ ແລະ ສຶກສາອົບຮົມໃຫ້ທົ່ວສັງຄົມ ເປັນເຈົ້າການໃນການປ້ອງກັນຕົນເອງ ແລະ ຫຼີກລ້ຽງຈາກຄວາມສ່ຽງໃນການຕິດເຊື້ອພະຍາດ ເປັນຕົ້ນແມ່ນ ການຫຼີກລ້ຽງການເດີນທາງໄປຕ່າງປະເທດ, ຫຼີກລ້ຽງການໄປບ່ອນທີ່ມີຄວາມສ່ຽງ, ບ່ອນທີ່ມີຄົນແອອັດ, ຖ້າມີຄວາມຈໍາເປັນຕ້ອງໄປ ກໍຕ້ອງມີມາດຕະການປ້ອງກັນຕົນເອງ ຕາມການແນະນໍາຂອງສາທາລະນະສຸກ ເຊັ່ນ: ໃຊ້ໜ້າກາກອັດປາກ, ລ້າງມືດ້ວຍນໍ້າຢາ ແລະ ສະບູ ເລື້ອຍໆ, ກິນຢູ່ ຖືກຕາມຫຼັກອະນາໄມ ແລະ ອື່ນໆ ຕາມການແນະນໍາຂອງຂະແໜງການກ່ຽວຂ້ອງ.

**3. ມາດຕະການປິ່ນປົວ ກໍລະນີກວດພົບຜູ້ຕິດເຊື້ອ:**

1) ກໍານົດສະຖານທີ່ໃນການປິ່ນປົວຜູ້ຕິດເຊື້ອໄວ້ ໂດຍຢູ່ນະຄອນຫຼວງວຽງຈັນ ແມ່ນກໍານົດເອົາໂຮງໝໍ 103, ໂຮງໝໍມິດຕະພາບ (150 ຕຽງ), ໂຮງໝໍມໍໂຫສົດ ແລະ ໂຮງໝໍໄຊເສດຖາ, ສ່ວນຢູ່ແຕ່ລະແຂວງກໍານົດເອົາໂຮງໝໍແຂວງທຸກໆແຂວງ ໂດຍໃຫ້ແຍກຈາກເຂດການປິ່ນປົວທົ່ວໄປອອກ;

2) ກະກຽມພະນັກງານແພດໝໍໄວ້ ໃຫ້ພຽງພໍ ພ້ອມທັງໃຫ້ມີການຝຶກອົບຮົມວິທີການຮັບມືຕົວຈິງ ໃຫ້ລະອຽດ, ພ້ອມກັນນັ້ນ ກໍ່ໃຫ້ພົວພັນປະສານຂໍການຊ່ວຍເຫຼືອຈາກຊ່ຽວຊານ ແລະ ແພດໝໍ ທີ່ມີຄວາມຊໍານານ ຈາກປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ເພື່ອກຽມໄວ້ ກໍລະນີມີຄວາມຈໍາເປັນ;

3) ກໍານົດຄວາມຕ້ອງການທາງດ້ານເຄື່ອງມື ແລະ ອຸປະກອນ ພ້ອມທັງສະເໜີແຜນຈັດຊື້ແຮ່ໄວ້ ໂດຍສະເພາະໜ້າກາກອະນາໄມ, ນໍ້າຢາລ້າງມື, ຊຸດປ້ອງກັນຂອງແພດໝໍ ແລະ ອຸປະກອນຕ່າງໆ ທີ່ຈໍາເປັນ. ອຸປະກອນເຄື່ອງມືໃດ ທີ່ເຫັນວ່າມີຄວາມຈໍາເປັນຕ້ອງໄດ້ ຂໍການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດ ກໍ່ໃຫ້ຮີບຮ້ອນສະເໜີໃຫ້ ລັດຖະບານພິຈາລະນາ;

4) ໃຫ້ກະກຽມ ຢາປົວ ແຮໄວ້ໃນກໍລະນີມີການຄົ້ນພົບວັກຊີນ ແລະ ຢາປິ່ນປົວໃໝ່ ທີ່ມີປະສິດທິຜົນ ຈາກຕ່າງປະເທດ, ກໍ່ໃຫ້ຮີບຮ້ອນປະສານ ເພື່ອຂໍຊື້ ຫລື ແບ່ງປັນ ຈາກປະເທດເພື່ອນມິດ ເພື່ອກຽມໃຫ້ແກ່ການປິ່ນປົວຜູ້ຕິດເຊື້ອພະຍາດ.

**4. ມາດຕະການຕິດຕາມ, ກວດກາ, ເຝົ້າລະວັງ ແລະ ປະເມີນສະພາບການ:**

1) ໃຫ້ປັບປຸງຄະນະສະເພາະກິດເພື່ອຊີ້ນຳການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດດັ່ງກ່າວ ໂດຍປັບປຸງພາລະບົດບາດ ແລະ ເພີ່ມບາງຂະແໜງການ ທີ່ກ່ຽວຂ້ອງ ທີ່ຍັງບໍ່ຄົບເຂົ້າຕື່ມ;

2) ປັບປຸງ ແລະ ຍົກລະດັບສູນຂໍ້ມູນຂ່າວສານ COVID-19 ເພື່ອໃຫ້ສາມາດປະສານງານ, ແລກປ່ຽນຂໍ້ມູນ, ສັງລວມຂໍ້ມູນ, ກວດກາຄວາມຊັດເຈນຂອງຂໍ້ມູນ ແລະ ແຈ້ງຂ່າວກ່ຽວກັບການລະບາດ, ການສະກັດກັ້ນ, ການປ້ອງກັນ ແລະ ຮັບມືກັບການລະບາດຂອງພະຍາດດັ່ງກ່າວຢ່າງຊັດເຈນ ແລະ ທັນການ ລວມທັງການສ້າງເວັບໄຊ ເພື່ອເປັນເຄື່ອງມືໃຫ້ມີປະສິດທິພາບ ແລະປະສິດທິຜົນຂອງຄະນະສະເພາະກິດ ເພື່ອແຈ້ງຂ່າວ, ເປັນເຄື່ອງມືໃນການປະສານງານ, ປຶກສາຫາລື, ສັງລວມຂໍ້ມູນທີ່ສຳຄັນ ຈາກພາຍໃນ ແລະ ຕ່າງປະເທດ, ອີງການຈັດຕັ້ງສາກົນ ຕໍ່ສະພາບການລະບາດດັ່ງກ່າວ. ອັນສຳຄັນແມ່ນເວບໄຊ ທີ່ສ້າງຂຶ້ນຂອງຄະນະສະເພາະກິດນັ້ນ ແມ່ນເພື່ອຕິດຕາມ ແລະ ແຈ້ງຂ່າວ ກ່ຽວກັບສະພາບການ ແລະ ມາດຕະການຕ່າງໆ ທີ່ເປັນທາງການ ເພື່ອແກ້ຂໍ້ຂ້ອງໃຈ ແລະ ສະກັດກັ້ນຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງ ມາປັ່ນປ່ວນຕໍ່ສັງຄົມ.

**5. ມາດຕະການທາງດ້ານເສດຖະກິດ:**

ລັດຖະບານໄດ້ມອບໃຫ້ທ່ານຮອງນາຍົກລັດຖະມົນຕີ ສອນໄຊ ສີພັນດອນ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າຄະນະ ນຳພາການຄົ້ນຄວ້າ ປະເມີນຜົນກະທົບຂອງ COVID-19 ຕໍ່ເສດຖະກິດ ແລະ ມາດຕະການແກ້ໄຂຮ່ວມກັບຂະແໜງການ ແລະ ພາກທຸລະກິດ ເຊິ່ງໄດ້ສະເໜີຕໍ່ກອງປະຊຸມລັດຖະບານໃນເທື່ອນີ້ ຄະນະດັ່ງກ່າວຈະໄດ້ປັບປຸງມາດຕະການທາງດ້ານເສດຖະກິດຕື່ມ ຫຼັງຈາກນັ້ນ ຈຶ່ງປະກາດໃຊ້ຕາມພາຍຫຼັງ.

**6. ມາດຕະການທົ່ວໄປ:**

1) ປຸກລະດົມທົ່ວສັງຄົມ ກໍ່ຄືປະຊາຊົນ ບໍ່ໃຫ້ແຕກຕື່ນ ແລະ ວິຕົກກັງວົນຈົນເກີນໄປ ເພື່ອຫຼີກລ້ຽງພຶດຕິກຳ ທີ່ເຮັດໃຫ້ສະພາບການທີ່ກໍ່ໃຫ້ເກີດຄວາມຫຍຸ້ງຍາກຫລາຍຂຶ້ນ ເປັນຕົ້ນແມ່ນການກັກຕຸນສິນຄ້າເຄື່ອງອຸປະໂພກບໍລິໂພກ ແລະ ວິພາກວິຈານ ທີ່ບໍ່ຖືກກັບຄວາມເປັນຈິງ.

ຈະມີມາດຕະການເຄັ່ງຂັດ ຕໍ່ກັບຜູ້ທີ່ສວຍໂອກາດໃນການກັກຕຸນສິນຄ້າ ໂດຍສະເພາະແມ່ນສິນຄ້າທີ່ຈຳເປັນ ເປັນຕົ້ນແມ່ນ : ໜ້າກາກອານາໄມ, ນ້ຳຢາລ້າງມື, ຢາປົວພະຍາດ, ອຸປະກອນການແພດ ແລະ ອື່ນໆ.

2) ເພີ່ມທະວີການກວດກາ ແລະ ປະຕິບັດມາດຕະການຕໍ່ການກະທຳທີ່ສ້າງຄວາມສັບສົນ ຫລື ສ້າງຄວາມເຂົ້າໃຈຜິດໃນຮູບແບບຕ່າງໆ ເຊັ່ນ: ການປ່ອຍຂ່າວທີ່ວ່າມີມູນຄວາມຈິງທາງສື່ສັງຄົມອອນລາຍ ແລະ ສື່ອື່ນໆ;

3) ຊຸກຍູ້ສົ່ງເສີມການຜະລິດພາຍໃນ ໂດຍສະເພາະເຄື່ອງອຸປະໂພກ-ບໍລິໂພກ ທີ່ຄາດວ່າຈະມີການຂາດແຄນ ມີການຈຳກັດການສົ່ງອອກຈາກປະເທດອື່ນ ໂດຍຖືວິກິດອັນນີ້ ໃຫ້ເປັນໂອກາດໃນການເພີ່ມທະວີຄວາມສາມາດໃນການກຸ້ມຕົນເອງ ແລະ ເພິ່ງຕົນເອງ ດັ່ງທີ່ເຮົາມີມູນເຊື້ອຜ່ານມາ;

4) ສືບຕໍ່ການປະສານງານແລກປ່ຽນຂໍ້ມູນຂ່າວສານ ແລະ ຍາດແຍ່ງເອົາການຮ່ວມມືຊ່ວຍເຫລືອຈາກສາກົນ ໂດຍສະເພາະໃນດ້ານທີ່ພວກເຮົາຈຳເປັນ ແລະ ຍັງບໍ່ທັນມີຄວາມພ້ອມ.

ມາດຕະການທີ່ກ່າວມານີ້ ຈະຖືກທົບທວນ ແລະ ປັບປຸງ ໂດຍອີງໃສ່ຂໍ້ມູນໃໝ່ ວິທະຍາສາດ ແລະ ການຜັນແປຂອງສະພາບການຕົວຈິງ ບົນພື້ນຖານການປະສານງານ, ຄົ້ນຄວ້າ ແລະ ປຶກສາຫາລື ກັບຊ່ຽວຊານ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຄຳຄິດເຫັນຂອງສັງຄົມ.

ຄະນະສະເພາະກິດ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ທຸກພາກສ່ວນໃນທົ່ວສັງຄົມ ເປັນເຈົ້າການ ໃນການຜັນຂະຫຍາຍເປັນມາດຕະການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ພ້ອມກັນນັ້ນ. ກໍ່ໃຫ້ຄະນະສະເພາະກິດຕິດຕາມ ແລະ ປະເມີນຜົນບັນດາມາດຕະການຈັດຕັ້ງດັ່ງກ່າວ ເພື່ອສະເໜີພິຈາລະນາປັບປຸງ ຫລື ແກ້ໄຂໃຫ້ແທດກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

**(ຂໍຂອບໃຈ)**